**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ນະຄອນຫຼວງວຽງຈັນ**

ເລກທີ 0966 /ຈນວ
ວັນທີ 11 ພະຈິກ 2019

# ຂໍ້ຕົກລົງ
## ວ່າດ້ວຍການພັດທະນາ ແລະ ຄຸ້ມຄອງເຂດສະຫງວນຄອງນ້ຳວຽງຈັນ

- ອີງຕາມ ມາດຕາ 19, 20 ໝວດທີ IV ຂອງກົດໝາຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ມາດຕາ ...... ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019; ມາດຕາ 78 ໝວດທີ I ພາກທີ XII ກົດໝາຍວ່າດ້ວຍ ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ສະບັບເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017;
- ອີງຕາມ ມາດຕາ 78 ໝວດທີ I ພາກທີ VII ກົດໝາຍວ່າດ້ວຍ ການຜັງເມືອງ ເລກທີ 40/ສພຊ, ລົງວັນທີ 16 ພະຈິກ 2017 ແລະ ແຜນຜັງຕົວເມືອງ ສະບັບທີ III, ເຊິ່ງຖືກຮັບຮອງຈາກກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນກຸມພາ 2019 ຄັ້ງວັນທີ 19-20 ກຸມພາ 201;
- ອີງຕາມ ວິໄສທັດ, ຍຸດທະສາດການພັດທະນານະຄອນຫຼວງວຽງຈັນ ໃນໄລຍະ ຮອດປີ 2030;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1617/ຫສນຍ, ລົງວັນທີ 16 ກັນຍາ 2019 ກ່ຽວກັບການເຫັນດີມອບສິດໃຫ້ເຈົ້າຄອງນະຄອນຫຼວງວຽງຈັນ ລົງນາມໃສ່ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ແລະ ພັດທະນາລຸ່ມຄອງນ້ຳວຽງຈັນ;
- ອີງຕາມ ມະຕິຕົກລົງຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ສະບັບເລກທີ 024/ສປນວ, ລົງວັນທີ 21 ມິຖຸນາ 2017 ແລະ ມະຕິຂອງຄະນະປະຈຳສະພາປະຊາຊົນນະຄອນຫຼວງວຽງຈັນ ວ່າດ້ວຍການຮັບຮອງເອົາຂໍ້ຕົກລົງຂອງເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການຄຸ້ມຄອງ ແລະ ພັດທະນາເຂດສະຫງວນຄອງນ້ຳວຽງຈັນ ສະບັບເລກທີ 100/ຄປຈ.ສປນວ, ລົງວັນທີ 08 ພະຈິກ 2019.

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຂໍ້ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດນະໂຍບາຍ, ຫຼັກການ ການຄຸ້ມຄອງ ແລະ ແຜນຜັງການພັດທະນາເຂດສະຫງວນຄອງນ້ຳວຽງຈັນ ເພື່ອປ້ອງກັນໄພນ້ຳຖ້ວມຕົວເມືອງ, ນຳໃຊ້ໃຫ້ກາຍເປັນພື້ນທີ່ກະສິກຳ, ເປັນແຫຼ່ງທ່ອງທ່ຽວສີຂຽວແຫ່ງໜຶ່ງທີ່ຍືນຍົງ, ທັງເປັນມາດຕະການໜຶ່ງ ເພື່ອບັນເທົາຄວາມຮ້ອນ ແລະ ຮັບປະກັນການປ່ຽນແປງສະພາບດິນ, ຟ້າ, ອາກາດ.

**ມາດຕາ 2 ນິຍາມ**

2.1. ຄອງນ້ຳວຽງຈັນ ແມ່ນຄອງນ້ຳທຳມະຊາດ ລົມທົບກັບຄອງຂຸດໃໝ່ ເຊິ່ງມີຄວາມຍາວທັງໝົດ 76 ກິໂລແມັດ, ເຊິ່ງເລີ່ມແຕ່ບຶງທາດຫຼວງ-ຫ້ວຍໝາກຮຽວ ທີ່ປະກອບດ້ວຍ: ບຶງທາດຫຼວງ, ບຶງຄັດເຄົ້າ, ບຶງນາຄວາຍບຶງສ້າງທີວບໍ່ແລະ ຫວ້ຍໝາກຮຽວ (ທິດ ຕາເວັນອອກສ່ຽງໃຕ້); ພ້ອມດຽວກັນນັ້ນ ກໍຍັງມີຄອງບຶງທາດຫຼວງ-ສາລາຄຳ-ວັງເດືອນຫ້າ ແລະ ຫ້ວຍເຄື່ອ (ທິດຕາເວັນຕົກສ່ຽງໃຕ້) ໂຮມເຂົ້າກັນຮຽກເປັນ " **ຄອງນ້ຳວຽງຈັນ** " ແລະ ຊື່ດັ່ງກ່າວເປັນການໃຫ້ກຽດແກ່ການສະເຫຼີມສະຫຼອງນະຄອນວຽງຈັນ ເປັນນະຄອນຫຼວງ ຂອງ ສປປ ລາວ ຄົບຮອບ 460 ປີ (1560-2020).

2.2. ການຄຸ້ມຄອງ ແລະ ພັດທະນາເຂດສະຫງວນຄອງນ້ຳວຽງຈັນ ແມ່ນການກຳນົດ ແລະ ຈັດຕັ້ງປະຕິບັດແຜນຜັງນຳໃຊ້ທຳມະຊາດເຂດພື້ນທີ່ຕ່ຳຕາມແຜນຜັງກວມລວມຂອງ ນະຄອນຫຼວງວຽງຈັນ ໃຫ້ສົມເຫດສົມຜົນ, ຖືກກັບຫຼັກວິຊາການສິ່ງແວດລ້ອມ, ໂດຍຖືສິ່ງແວດລ້ອມເປັນກົກຂອງການຄຸ້ມຄອງ ແລະ ການນຳໃຊ້ທີ່ດິນ, ຍຶດຖືເອົາຜົນປະໂຫຍດສ່ວນລວມສູງກ່ວາຜົນປະໂຫຍດສ່ວນບຸກຄົນ ແລະ ຜົນປະໂຫຍດໄລຍະຍາວ ເປັນຕົວກຳນົດຜົນປະໂຫຍດໄລຍະສະເພາະໜ້າ.

**ມາດຕາ 3 ອະທິບາຍສັບ**

3.1. ເຂດສະຫງວນ ໝາຍເຖິງ: ພື້ນທີ່ດິນ ທີ່ລັດກຳນົດໄວ້ເພື່ອສາທາລະນະປະໂຫຍດໃດໜຶ່ງ ແລະ ຈະເອົາເຂດດັ່ງກ່າວຈັດເຂົ້າໃນແຜນພັດທະນາ ເປັນອ່າງໂຕ່ງນ້ຳ ແລະ ກິດຈະການລວມດຽວກັນ (ເບິ່ງແຜນຜັງຊ້ອນທ້າຍຂໍ້ຕົກລົງສະບັບນີ້).

3.2. ອ່າງໂຕ່ງນ້ຳ ໝາຍເຖິງ: ພື້ນທີ່ໆຍັງເປັນດິນ ຫຼື ເປັນໜອງນ້ຳມາກ່ອນ ທີ່ຈະສ້າງເປັນອ່າງນ້ຳໃຫ່ຍສາມາດຮັບຮອງນ້ຳຝົນລະດັບສູງສຸດ ແລະ ເປັນບ່ອນບຳບັດນ້ຳເປື້ອນໃນລະດູແລ້ງ; ອ່າງໂຕ່ງປະກອບດ້ວຍອ່າງພັກນ້ຳຕາມຈຸດຕ່າງໆ (ເບິ່ງແຜນທີ່ຕິດຂັດ).

3.3. ບຶງ, ໜອງ, ອ່າງໂຕ່ງທຳມະຊາດ ໝາຍເຖິງ: ບຶງທາດຫຼວງ, ໜອງໜ່ຽງ, ບຶງຄັດເຄົ້າ, ບຶງນາຄວາຍ, ບຶງຈອມສີ, ບຶງວັງເດືອນຫ້າ, ບຶງສາລະຄຳ ແລະ ບຶງອື່ນໆ ທີ່ເກີດຂຶ້ນຕາມທຳມະຊາດມາແຕ່ດຶກດຳບັນ.

3.4. ການພັດທະນາ ໝາຍເຖິງ: ການປັບປຸງສະພາບຄອງນ້ຳ ແລະ ພື້ນທີ່ເຂດສະຫງວນຄອງນ້ຳ ໃຫ້ດີຂຶ້ນກວ່າເກົ່າ.

3.5 ການນຳໃຊ້ ໝາຍເຖິງ: ການຈັດກິດຈະການຕ່າງໆ ໃນຄອງນ້ຳ ແລະ ເຂດສະຫງວນ ທີ່ກຳນົດໃນຂໍ້ຕົກລົງສະບັບນີ້.

3.6. ການຄຸ້ມຄອງ ໝາຍເຖິງ: ການກວດກາການຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້.

3.7. ແຜນທີ່ຕິດຄັດ ໝາຍເຖິງ: ອຸປະກອນຮູບແຕ້ມ, ຮູບຖ່າຍ, ແຜນວາດ ທີ່ທາງການນຳໃຊ້ເຂົ້າໃນຂໍ້ຕົກລົງສະບັບນີ້.

3.8. ຜົນປະໂຫຍດລວມ ໝາຍເຖິງ: ສິ່ງທີ່ປະຊາຊົນສ່ວນໃຫ່ຍ ຫຼື ຊາວນະຄອນຫຼວງວຽງຈັນ ຈະໄດ້ຮັບຈາກໂຄງການນີ້.

3.9. ຜົນປະໂຫຍດສະເພາະ ໝາຍເຖິງ: ສິ່ງທີ່ບຸກຄົນ ຫຼື ນິຕິບຸກຄົນຈະໄດ້ຮັບຈາກໂຄງການນີ້.

3.10. ຖືສິ່ງແວດລ້ອມເປັນກົກໃນການພັດທະນາເຂດລຸ່ມຄອງນ້ຳ ໝາຍເຖິງ: ການວາງແຜນພັດທະນາ ຫຼື ການປະຕິບັດຕົວຈິງ ລ້ວນແຕ່ຍຶດຖືເອົາປະສິດທິຜົນການນຳໃຊ້ທຳມະຊາດ: ທີ່ດິນ, ລະດັບຄວາມຄ້ອຍຊັນຂອງດິນ, ຄວາມໄວຂອງນ້ຳໄຫຼ, ຂະໜາດນ້ຳຍຶ່ງກະຈາຍຈາກນ້ຳຂອງ ແລະ ການຖ່າຍເທນ້ຳຝົນຈາກຕົວເມືອງລົງໃສ່ນ້ຳຂອງ... ເປັນທາງເລືອກຂອງການອອກແບບ, ການຄິດໄລ່ການສິ້ນເປືອງການນຳໃຊ້ອຸປະກອນຈັກດູດນ້ຳ ແລະ ການບໍລິຫານຈັດການນ້ຳ ໃນລະດູຝົນ, ລະດູແລ້ງ.

3.11. ການບຳບັດນ້ຳເປື້ອນໃນຕົວເມືອງ ແລະ ຄອງນ້ຳວຽງຈັນ ໝາຍເຖິງ: ການນຳໃຊ້ວິທະຍາການໃດໜຶ່ງເພື່ອເຮັດໃຫ້ນ້ຳເປື້ອນກັບກາຍເປັນນ້ຳສະອາດ ບັນລຸມາດຕະຖານແຫ່ງຊາດ ແລະ ສາກົນ.

3.12. ການກຳນົດຄອງນ້ຳ ແລະ ເຂດສະຫງວນ ແຫຼ່ງທ່ອງທ່ຽວສີຂຽວ ໝາຍເຖິງ: ເປົ້າໝາຍການພັດທະນາຄອງນ້ຳວຽງຈັນ ໃຫ້ສາມາດເດີນເຮືອຂະໜາດນ້ອຍເພື່ອການທ່ອງທ່ຽວ ແລະ ສ້າງເຂດສະຫງວນ 2 ຟາກຄອງ ເປັນເຂດຂຽວ ຢ່າງເປັນເອກະພາບ (ເບິ່ງແຜນຜັງເລກທີ1-0017) ເຊິ່ງຈະສຳພັດໄດ້: ທົ່ງຫຍ້າ, ປ່າໄມ້ຂຽວ, ນ້ຳໃສ, ທ້ອງຟ້າໃສ, ອາກາດສົດໃສ.

**ມາດຕາ 4 ຫຼັກການຄຸ້ມຄອງ ແລະ ພັດທະນາ**

4.1. ສອດຄ່ອງກັບກົດໝາຍ ແລະ ນິຕິກຳຂອງລັດ ກ່ຽວກັບເຂດສະຫງວນບຶງ, ໜອງ, ຫ້ວຍ, ສາຍນ້ຳລຳທານທຳມະຊາດ.

4.2. ຄຸ້ມຄອງລວມສູນ ເປັນເອກະພາບອັນໜຶ່ງອັນດຽວ ພາຍໃຕ້ແຜນຜັງຕົວເມືອງວຽງຈັນ ສະບັບທີ III; ບຸກຄົນ, ນິຕິບຸກຄົນທີ່ມີສິດໃຊ້, ສິດນຳໃຊ້ທີ່ດິນໃນເຂດດັ່ງກ່າວ ຕ້ອງປະຕິບັດຕາມແຜນຜັງ ແລະ ຢູ່ພາຍໃຕ້ຜົນປະໂຫຍດສ່ວນລວມ ຢູ່ເໜືອສ່ວນຕົວ.

4.3. ຍຶດຖືຫຼັກເກນ, ຕົວຊີ້ວັດເຕັກນິກດ້ານສິ່ງແວດລ້ອມ ກ່ຽວກັບນ້ຳ ແລະ ດິນເຂດຕ່ຳ ເປັນຫຼັກປະຕິບັດເປັນຕົ້ນ:

- ແຜນຜັງຕົວຈິງປະຈຸບັນໃນຂອບເຂດສະຫງວນ ມາດຕາສ່ວນ 1:5000.
- ແຜນຜັງຫຼັກໝາຍຂອບເຂດສະຫງວນ ມາດຕາສ່ວນ 1:5000.
- ແຜນຜັງກຳນົດຈຸດພິກັດ ດ້ວຍ GPS ມາດຕາສ່ວນ 1:5000.

**ມາດຕາ 5 ນະໂຍບາຍຂອງລັດ**

5.1. ລັດອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ທີ່ມີສິດນຳໃຊ້ ແລະ ສິດໃຊ້ທີ່ດິນໃນເຂດສະຫງວນ 2 ຟາກຄອງກ່ອນອອກຂໍ້ຕົກລົງສະບັບນີ້ ສາມາດສືບຕໍ່ນຳໃຊ້ ແລະ ໄດ້ຮັບໝາກຜົນຈາກການຜະລິດດ້ານກະສິກຳ ຈົນກວ່າຮອດເວລາທີ່ໂຄງການພັດທະນາເຂດສະຫງວນມາເຖິງ ຈຶ່ງຈະຖືກຖອນສິດໃຊ້ ແລະ ສິດນຳໃຊ້ຕາມຕົວຈິງ ແລະ ຈະໄດ້ຮັບການຊົດເຊີຍ ຫຼື ທົດແທນ ຕາມກົດໝາຍກ່ຽວຂ້ອງກຳນົດໄວ້.

5.2. ສຳລັບຜູ້ທີ່ໄດ້ສິດນຳໃຊ້ທີ່ດິນ ແລະ ລວມທັງສິ່ງປຸກສ້າງຖາວອນ ຫຼື ເຄິ່ງຖາວອນໃນເຂດສະຫງວນມາກ່ອນ, ແຕ່ບໍ່ມີເອກະສານອ້າງອີງ ລັດຈະພິຈາລະນາຕາມກົດໝາຍທີ່ດິນ ມາດຕາ.... (ສະບັບປັບປຸງ)ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ອາດຈະໃຫ້ນະໂຍບາຍໃຫ້ແກ່ບຸກຄົນ ຫຼື ນິຕິບຸກຄົນມີສ່ວນຮ່ວມໃນການປົກປັກຮັກສາ ແລະ ນຳໃຊ້ ແຕ່ຕ້ອງສອດຄ່ອງກັບແຜນຜັງ, ກົງກັນຂ້າມຖ້າບໍ່ປະຕິບັດຕາມແຜນຜັງ 3-5 ປີ ຊຶ່ງກົດໝາຍກຳນົດ ຈະຖືກຖອນສິດ ແລະ ໃຫ້ຜູ້ສົນໃຈພັດທະນາ.

5.3. ລັດຮັບຮູ້ສິດໃຊ້ ແລະ ສິດນຳໃຊ້ທີ່ດິນໃນບັນດາໂຄງການລົງທຶນ, ທີ່ລັດໄດ້ອະນຸຍາດຢ່າງຖືກຕ້ອງໃຫ້ບຸກຄົນ, ນິຕິບຸກຄົນໃນໄລຍະຜ່ານມາ ທີ່ບໍ່ແຕະຕ້ອງກັບອ່າງໂຕ່ງນ້ຳ ແລະ ບໍ່ແຕະຕ້ອງຕໍ່ເສັ້ນທາງເຊື່ອມຕໍ່ **(ເບິ່ງຕາມແຜນທີ່ຊ້ອນທ້າຍຂໍ້ຕົກລົງສະບັບນີ້)**, ຖ້າຫາກມີການແຕະຕ້ອງກໍ່ໃຫ້ມີການປັບປຸງປ່ຽນແປງແຜນຜັງ ຂອງຕົນໃຫ້ສອດຄ່ອງກັບແຜນກອນລວມສະບັບນີ້ ໃນເວລານີ້ ຫຼື ເວລາທີ່ເໝາະສົມ.

5.4. ລັດ ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ລວມທັງຜູ້ມີສິດໃຊ້ ຫຼື ສິດນຳໃຊ້ທີ່ດິນໃນເຂດສະຫງວນ ໃຫ້ເຂົ້າຮ່ວມໂຄງການພັດທະນາຄອງນ້ຳວຽງຈັນ; ກໍ່ສ້າງຄອງນ້ຳວຽງຈັນ ແລະ ເຂດສະຫງວນບົນພື້ນຖານແຜນຜັງເອກະພາບ ແລະ ກົດໝາຍຕ່າງໆກຳນົດໄວ້.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ສຳລັບການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ບຸກຄົນ, ນິຕິບຸກຄົນໃນຂອບເຂດທີ່ກ່ຽວຂ້ອງກັບຄອງນ້ຳວຽງຈັນ.

## ໝວດທີ 2
## ກຳນົດຂອບເຂດສະຫງວນ, ເຕັກນິກ ແລະ ການພັດທະນາຄອງນ້ຳວຽງຈັນ

**ມາດຕາ 7 ຂອບເຂດຄອງນ້ຳວຽງຈັນ**

7.1 ຄອງນ້ຳວຽງຈັນ ກຳນົດຕາມແລວນ້ຳທຳມະຊາດ ສົມທົບກັບການຕົບແຕ່ງໃໝ່ຕາມຈຸດປະສົງຂອງໂຄງການ ເຊິ່ງມີຄວາມຍາວທັງໝົດ 76 ກິໂລແມັດ, ຄວາມກ້ວາງ-ແຄບ ຕາມມາດຕາ 8 ແລະ ຄວາມເລິກ ລະບຸໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ໂດຍຖືເອົາ ຂົວດົງຄຳຊ້າງ ເປັນຈຸດສູນ (0) ເຊື່ອມຈອດສອງຄອງນ້ຳ.

7.2 ການພັດທະນາຄອງນ້ຳຕາມແລວນ້ຳໄຫຼ ເຊິ່ງແບ່ງອອກເປັນສອງຄອງຄື:

- ຄອງທີ 1: (0-A) ຈາກຂົວດົງຄຳຊ້າງ ຫາ ບຶງທາດຫຼວງ, ບຶງຄັດເຄົ້າ, ບຶງນາຄວາຍ-ຫ້ວຍໝາກຮຽວມີຄວາມຍາວ 65 ກ່ວາກິໂລແມັດ.
- ຄອງທີ 2: (0-B) ຈາກຂົວດົງຄຳຊ້າງ-ບຶງສາລາຄຳຫາຫ້ວຍເດື່ອ ມີຄວາມຍາວ 11 ກ່ວາກິໂລແມັດ.

**ມາດຕາ 8 ເຂດສະຫງວນ ສອງຟາກຄອງນ້ຳ**

ຂອບເຂດການສະຫງວນ ກຳນົດຄວາມກວ້າງເປັນແຕ່ລະຈຸດທີ່ຕັ້ງ ດັ່ງນີ້:

- **ຄອງທີ 0.A:**

- **ຈຸດ 0.A1:** ນັບຈາກເສັ້ນທາງຕັດຜ່ານບ້ານໜອງໄຮ-ບ້ານດົງຄຳຊ້າງ ຫາ ຂົວເສັ້ນທາງດອນນົກຂຸ້ມ-ຖະໜົນ 450 ປີ ມີຄວາມຍາວ 3,902 ແມັດ ສະຫງວນຈາກໃຈກາງຄອງເບື້ອງລະ 250 ແມັດ.

- **ຈຸດ 0.A2:** ນັບຈາກຂົວເສັ້ນທາງດອນນົກຂຸ້ມ-ຖະໜົນ 450 ປີ ຫາ ຂອບເຂດພັດທະນາເສດຖະກິດບຶງທາດຫຼວງມີຄວາມຍາວ 611 ແມັດ ສະຫງວນຈາກໃຈກາງຄອງເບື້ອງລະ 250 ແມັດ.

- **ຈຸດ 0.A3:** ໃນຂອບເຂດໂຄງການພັດທະນາເສດຖະກິດບຶງທາດຫຼວງ ກຳນົດເຂດສະຫງວນໄວ້ທັງ ສອງດ້ານ; ດ້ານທີ 01: ທິດຕາເວັນອອກຕິດແປະກັບບ້ານ ໂນນຫວາຍ ແລະ ບ້ານໂນນຄໍ້ ມີຄວາມຍາວ 4,303 ແມັດ ສະຫງວນຈາກເຂດແດນໂຄງການພັດທະນາເສດຖະກິດບຶງທາດຫຼວງ 50 ແມັດ; ດ້ານທີ 2: ທິດຕາເວັນຕົກຕິດກັບບ້ານ ໂພນທັນ, ບ້ານຮ່ອງແກ ແລະ ສູນການຄ້າລາວໄອເຕັກມີຄວາມຍາວ 2,327 ແມັດ ສະຫງວນຈາກເຂດແດນໂຄງການພັດທະນາເສດຖະກິດບຶງທາດຫຼວງ 50 ແມັດ, ນັບຈາກສູນການຄ້າລາວໄອເຕັກໄປຫາຮ່ອງແກ ມີຄວາມຍາວ 1,267 ແມັດ ສະຫງວນຈາກເຂດແດນໂຄງການພັດທະນາເສດຖະກິດບຶງທາດຫຼວງ 25 ແມັດ.

- **ຈຸດ 0.A4:** ນັບຈາກຂົວຮ່ອງແກ ຫາ ເຂດພັດທະນາບຶງທາດຫຼວງ ມີຄວາມຍາວ 508 ແມັດ ສະຫງວນຈາກໃຈກາງຄອງ ເບື້ອງລະ 25 ແມັດ.

- **ຈຸດ 0.A5:** ນັບຈາກເຂດພັດທະນາບຶງທາດຫຼວງ ຫາ ຂົວບ້ານຫົວຂົວ ມີຄວາມຍາວ 797 ແມັດ, ທິດຕາເວັນອອກ ຕິດ ກັບບ້ານຫົວຂົວ, ບ້ານໂນນຄໍ້ ສະຫງວນຈາກໃຈກາງຄອງ 70 ແມັດ, ທິດຕາເວັນຕົກຕິດກັບບ້ານຮ່ອງແກ່, ບ້ານທາດຫຼວງໃຕ້ ສະຫງວນຈາກໃຈກາງຄອງ 180 ແມັດ.

- **ຈຸດ 0.A6:** ນັບຈາກຂົວ (ບ້ານຫົວຂົວ-ທາດຫຼວງ) ຫາ ຂົວໜອງໜ່ຽງ ມີຄວາມຍາວ 2.814 ແມັດ ສະຫງວນຈາກໃຈກາງຄອງເບື້ອງຂວາມື ຕາມທິດທາງນ້ຳໄຫຼ 100 ແມັດ; ສະຫງວນຈາກໃຈກາງຄອງເບື້ອງຊ້າຍມື

ຕາມທິດທາງນ້ຳໄຫຼ 150 ແມັດ; ຢູ່ເຂດທີ່ຕິດແປະຂົວໜອງໜ່ຽງທິດຕາເວັນອອກ ມີຄວາມຍາວ 674 ແມັດ ສະຫງວນຈາກໃຈກາງຄອງ 50 ແມັດ.

- **ຈຸດ 0.A7**: ນັບຈາກໂຮງຮຽນປະຖົມບ້ານວຽງຈະເລີນ (ຕາມສາຍຮ່ອງແຊງ) ຫາ ບຶງຄັດເຄົ້າ ມີຄວາມຍາວ 1,089 ແມັດ ສະຫງວນຈາກໃຈກາງຄອງ ເບື້ອງລະ 25 ແມັດ.

- **ຈຸດ 0.A8:** ນັບຈາກໂຮງຮຽນມິດຕະພາບລາວ-ຫວຽດ ຫາ ບຶງຄັດເຄົ້າ ມີຄວາມຍາວ 1.798 ແມັດ, ສະຫງວນຈາກໃຈກາງຄອງເບື້ອງລະ 7,5 ແມັດ ຕາມຮ່ອງລະບາຍນ້ຳທີ່ກໍ່ສ້າງສຳເລັດແລ້ວ.

- **ຈຸດ 0.A9:** ນັບຈາກຂົວໜອງໜ່ຽງ ຫາ ຂົວຊຳເຄ້ ມີຄວາມຍາວ 4.840 ແມັດ ສະຫງວນຈາກໃຈກາງຄອງເບື້ອງຂວາມີຕາມທິດທາງນ້ຳໄຫຼ 150 ແມັດ, ສະຫງວນຈາກໃຈກາງຄອງເບື້ອງຊ້າຍມີຕາມທິດທາງນ້ຳໄຫຼ 100 ແມັດ, ໃນຊ່ວງໄລຍະດັ່ງກ່າວມີບ່ອນເກັບພັກນ້ຳ 01 ຈຸດຄື: ຢູ່ເຂດບຶງຄັດເຄົ້າມີເນື້ອທີ່ 75 ເຮັກຕາ.

- **ຈຸດ 0.A10:** ນັບຈາກຂົວຊຳເຄ້ ຫາ ເຂດສະໜາມກ໋ອບ (ບໍລິສັດລາວລິງທຶນ ແລະ ພັດທະນາຊັບພະຍາກອນ) ມີຄວາມຍາວ 1,594 ແມັດ ສະຫງວນຈາກໃຈກາງຄອງເບື້ອງລະ 100 ແມັດ.

- **ຈຸດ 0.A11:** ນັບຈາກສະໜາມກ໋ອບ (ບໍລິສັດ ລາວລິງທຶນ ແລະ ພັດທະນາຊັບພະຍາກອນ) ຫາ ຂົວບ້ານນາຄວາຍຖະໜົນ 450 ປີ ມີຄວາມຍາວ 4,858 ແມັດ ສະຫງວນຈາກໃຈກາງຄອງເບື້ອງລະ 250 ແມັດ.

- **ຈຸດ 0.A12:** ນັບຈາກຂົວບ້ານນາຄວາຍ ຖະໜົນ 450 ປີ ຫາ ຂົວບ້ານ ຈອມສີ ມີຄວາມຍາວ 3,090 ແມັດ ສະຫງວນຈາກໃຈກາງຄອງເບື້ອງຂວາມີ ຕາມທິດທາງນ້ຳໄຫຼ 250 ແມັດ; ສະຫງວນຈາກໃຈກາງຄອງເບື້ອງຊ້າຍມີຕາມທິດທາງນ້ຳໄຫຼ 150 ແມັດ, ໃນຊ່ວງໄລຍະດັ່ງກ່າວມີບ່ອນເກັບພັກນ້ຳ 03 ຈຸດຄື: ຢູ່ເຂດບ້ານນາຄວາຍ, ມີ 02 ຈຸດ ເນື້ອທີ່ 65 ເຮັກຕາ ແລະ ເນື້ອທີ່ 70 ເຮັກຕາ, ເຂດບ້ານສ້າງຫົວບໍ່ ມີເນື້ອທີ່ 52 ເຮັກຕາ.

- **ຈຸດ 0.A13:** ນັບຈາກຂົວບ້ານຈອມສີ ຫາ ບ້ານໝາກຮຽວ ມີຄວາມຍາວ 32.127 ແມັດ, ສະຫງວນຈາກໃຈກາງຄອງເບື້ອງລະ 250 ແມັດ; ສະເພາະຢູ່ເຂດບໍລິເວນຕິດແປະກັບບ້ານຈອມສີ ເບື້ອງຂວາມີ ມີຄວາມຍາວ 914 ແມັດ, ສະຫງວນຈາກໃຈກາງຄອງຕາມທິດທາງນ້ຳໄຫຼ 150 ແມັດ.

- **ຈຸດ 0.A14:** ນັບຈາກບ້ານໝາກຮຽວ ຫາ ປະຕູນ້ຳຫ້ວຍໝາກຮຽວ ມີຄວາມຍາວ 1.979 ແມັດ, ສະຫງວນຈາກໃຈກາງຄອງເບື້ອງຂວາມີ ຕາມທິດທາງນ້ຳໄຫຼ 250 ແມັດ, ສະຫງວນຈາກໃຈກາງຄອງເບື້ອງຊ້າຍມີຕາມທິດທາງນ້ຳໄຫຼ 50 ແມັດ.

- **ຄອງທີ 0.B:**

- **ຈຸດ 0.B1:** ນັບຈາກເສັ້ນທາງຕັດຜ່ານບ້ານໜອງໄຮ-ບ້ານດົງຄຳຊ້າງ ຫາ ໂຮງງານເບຍລາວ ມີຄວາມຍາວ 3,286 ແມັດ ສະຫງວນຈາກໃຈກາງຄອງເບື້ອງລະ 250 ແມັດ.

- **ຈຸດ 0.B2:** ນັບຈາກໂຮງງານເບຍລາວ ທາງທິດເໜືອ ຫາ ແຕ່ຂົວສາລະຄຳ (ຖະໜົນທ່າເດື່ອ) ມີຄວາມຍາວ 464 ແມັດ ສະຫງວນຈາກໃຈກາງຄອງເບື້ອງລະ 50 ແມັດ.

- **ຈຸດ 0.B3:** ນັບຈາກຂົວສາລະຄຳ (ຖະໜົນທ່າເດື່ອ) ຫາ ບ້ານດອນຝ້າຍ ມີຄວາມຍາວ 1.439 ແມັດ ສະຫງວນຈາກໃຈກາງຄອງເບື້ອງລະ 25 ແມັດ.

- **ຈຸດ 0.B4**: ນັບຈາກບ້ານດອນຝ້າຍ ຫາ ຈຸດພັກນ້ຳວັງເດືອນຫ້າ ມີຄວາມຍາວ 873 ແມັດ ສະຫງວນຈາກໃຈກາງຄອງເບື້ອງລະ 50 ແມັດ.

- **ຈຸດ 0.B5**: ນັບຈາກຈຸດພັກນ້ຳວັງເດືອນຫ້າ ຫາ ຫ້ວຍເດື່ອ ມີຄວາມຍາວ 5.221 ແມັດ ສະຫງວນຈາກໃຈກາງຄອງເບື້ອງລະ 125 ແມັດ.

- **ສຳລັບບາງໂຄງການທີ່ໄດ້ເຊັນສັນຍາກັບລັດຖະບານແລ້ວ ແມ່ນໃຫ້ປະຕິບັດຕາມສັນຍາ ຫຼື ຖ້າບໍ່ທັນໄດ້ຮັບການອະນຸມັດດ້ານແຜນຜັງ ກໍ່ໃຫ້ປັບປຸງໄປຕາມຂອບຂອງຂໍ້ຕົກລົງສະບັບນີ້.**

**( ລະອຽດມີແຜນຜັງຊ້ອນທ້າຍຂໍ້ຕົກລົງສະບັບນີ້ ).**

## ມາດຕາ 9 ມາດຖານດ້ານເຕັກນິກຂອງຄອງນ້ຳ

9.1. **ມາດຖານຕະຝັ່ງ**: ການອອກແບບຕະຝັ່ງທັງສອງຟາກຄອງນ້ຳ ແມ່ນໄດ້ນຳໃຊ້ເຕັກນິກການອອກແບບຄອງນ້ຳ ຂອງກົມຊົນລະປະທານ ເຊິ່ງຂຶ້ນກັບລວງສູງຄອງນ້ຳ ແລະ ປະເພດດິນ ທີ່ຈະນຳມາກໍ່ສ້າງຕະຝັ່ງ ຕາມການອອກແບບທາງການ ລະອຽດຄື:

- ຂົວດົງຄຳຊ້າງ-ຂົວບຶງທາດຫຼວງ ຄວາມເລິກປະມານ 3-3,5 ແມັດ, ກ້ວາງ 50-80 ແມັດ ແລະ ກຳນົດຄວາມເນີນ ສະລັບຕະຝັ່ງ 1:1.
- ບຶງທາດຫຼວງ-ຫວ້ານເຜີ້ງ-ບຶງທາດຫຼວງ ກ້ວາງຫຼາຍກ່ວາ 30 ແມັດ, ເລິກ 2,5-3 ແມັດ ແລະ ຄ້ອຍຊັນ 1:1
- ຂົວໜອງໜ່ຽງ ລວງສູງນ້ຳໃນ, ຂົວໜອງໜ່ຽງ-ຂົວຊຳເຄ້ ກ້ວາງ 30-50ແມັດ ຂົວຊຳເຄ້-ຂົວນາຄວາຍ ຄວາມເລິກປະມານ 3.0 ແມັດ, ຄວາມເນີນຕະຝັ່ງ 1:1.2, ຄວາມຄ້ອຍຊັນໃຫ້ໃຊ້ມາດຖານດຽວກັນທີ່ສຸດ.
- ຂົວນາຄວາຍ-ຂົວ 450 ປີ ຄວາມເລິກ 3.5 ແມັດ,ກຳນົດຄວາມເນີນຕະຝັ່ງ 1:1.5.
- ຂົວບ້ານຈອມສີ-ປະຕູນ້ຳຫ້ວຍໝາກຮຽວ ຄວາມເລິກ 3.75 ແມັດ ກຳນົດຄວາມເນີນຕະຝັ່ງ 1:1.5.
- ຄອງຫ້ວຍເດື່ອ-ຂົວດົງຄຳຊ້າງ-ໂຮງງານເບຍ ແລະ ໂຮງງານເບຍ-ປະຕູນ້ຳຫ້ວຍໝາກຮຽວ ຄວາມເລິກ 3.0 ແມັດ ກຳນົດຄວາມເນີນຕະຝັ່ງ 1:1.2. **(ເບິ່ງຕາມບົດລາຍງານຊ້ອນທ້າຍຂໍ້ຕົກລົງສະບັບນີ້)**

9.2. **ມາດຖານພື້ນຄອງ**: ແມ່ນໄດ້ຄິດໄລ່-ອອກແບບ ເພື່ອໃຫ້ຮັບປະກັນການລະບາຍນ້ຳໃນລະດູຝົນ ສາມາດເກັບກັກນ້ຳໃຊ້ ໃນລະດູແລ້ງເຊິ່ງແຕ່ລະເຂດມີຄວາມກວ້າງພື້ນຄອງແຕກຕ່າງກັນ:

- ໄລຍະຂົວດົງຄຳຊ້າງ-ຂົວດອນນົກຂຸ້ມ 150 ແມັດ (ອ່າງເກັບນ້ຳ).
- ໄລຍະໂຄງການເຂດບຶງທາດຫຼວງ 30 ແມັດ.
- ໄລຍະແຕ່ຂົວຕະຫຼາດຫົວຂົວ-ຂົວໜອງໜ່ຽງ, ຂົວໜອງໜ່ຽງ-ຂົວຊຳເຄ້, ຂົວນາຄວາຍ-ຂົວ 450 ປີ ຄວາມກ້ວາງພື້ນຄອງ 30 ແມັດ (ອ່າງເກັບນ້ຳ).
- ຂົວຊຳເຄ້-ຂົວນາຄວາຍ 30 ແມັດ (ຄອງນ້ຳ).
- ຂົວບ້ານຈອມສີ-ປະຕູນ້ຳຫ້ວຍໝາກຮຽວ ຄວາມກ້ວາງພື້ນຄອງ 100 ແມັດ (ອ່າງເກັບນ້ຳ).
- ໄລຍະແຕ່ຂົວດົງຄຳຊ້າງ-ໂຮງງານເບຍ ຄວາມກ້ວາງພື້ນຄອງ 50 ແມັດ (ອ່າງເກັບນ້ຳ) ແລະ ໂຮງງານເບຍ-ປະຕູນ້ຳຫ້ວຍເດື່ອ ຄວາມກ້ວາງພື້ນຄອງ 25 ແມັດ. **(ເບິ່ງຕາມບົດລາຍງານຊ້ອນທ້າຍຂໍ້ຕົກລົງສະບັບນີ້)**

## ມາດຕາ 10 ມາດຖານເຕັກນິກສຳລັບພື້ນທີ່ແຜ່ລະບາຍນ້ຳໃນເຂດສະຫງວນ 2 ຟາກຄອງນ້ຳ

10.1 ເຕັກນິກຂັ້ນພື້ນຖານຂອງການກຳນົດເຂດແຜ່ລະບາຍນ້ຳ ມີຕົວຊີ້ວັດດັ່ງນີ້: ພື້ນທີ່ສະຫງວນຄວາມກວ້າງ-ແຄບ, ຄ້ອຍຊັນ ໃຫ້ອີງຕາມທຳມະຊາດປະໄວ້ (ຖືຫຼັກການເຕັກທຳມະຊາດເປັນຫຼັກ) ແລະ ປະສົມປະສານການດັດປັບທຳມະຊາດເລັກໜ້ອຍ, ໂດຍສາມາດປັບດິນໃຫ້ຮາບພຽງ ບໍ່ສູງກ່ວາຈຸດສູງສຸດ ຫາ ຕ່ຳສຸດ.

10.2. ເຕັກນິກຢູ່ນອກເຂດກໍານົດເປັນພື້ນທີ່ລະບາຍນໍ້າ ສາມາດຖົມ ແລະ ປຸກສ້າງຕາມແຜນຜັງຕົວເມືອງກໍານົດ ແລະ ຕ້ອງໄດ້ອະນຸຍາດຈາກເຈົ້າໜ້າທີ່ຜັງເມືອງ.

10.3. ເຕັກນິກການປ້ອງກັນການບຸກລຸກເຂດສະຫງວນ ໃຫ້ສ້າງເສັ້ນທາງອ້ອມຮອບຕາມແລວເຂດສະຫງວນ ຫຼືໃຫ້ປູກປ່າໄມ້ ຢ່າງເປັນເອກະພາບ.

10.4. ມາດຖານອ່າງເກັບນໍ້າໃນເຂດສະຫງວນ ໃຫ້ອອກແບບເປັນປະເພດຄອງດິນ, ບາງຈຸດຄອງເບຕົງ ຫຼື ຫີນ ຕາມການອອກແບບຂອງທາງການກໍານົດ ແຕ່ໃນຕໍ່ໄປໃຫ້ກໍ່ສ້າງດ້ວຍຫີນພູຢ່າງເປັນເອກະພາບ.

**ມາດຕາ 11 ແຜນຜັງການພັດທະນາ ແລະ ນໍາໃຊ້ ເຂດສະຫງວນສອງຟາກຄອງນໍ້າວຽງຈັນ**

11.1. ແຜນຜັງກວມລວມຂອງການພັດທະນາ, ນໍາໃຊ້ຄອງນໍ້າ ແລະ ເຂດສະຫງວນ ແມ່ນການຮັບປະກັນຄວາມສ່ຽງນໍ້າຖ້ວມຂັງໃນລະດູຝົນ, ເປັນອ່າງໂຕ່ງນໍ້າ, ນໍາໃຊ້ຄອງນໍ້າເປັນແຫຼ່ງທ່ອງທ່ຽວສີຂຽວທາງນໍ້າ ແລະ ນໍາໃຊ້ແຫຼ່ງນໍ້າເຂົ້າໃນການຜະລິດກະສິກໍາຢ່າງຍືນຍົງ ແລະ ສ້າງໃຫ້ເປັນຄອງນໍ້າໃໝ່ເຊື່ອມຈອດຈາກນໍ້າງື່ມຕອນເທິງໃນອະນາຄົດ.

11.2. ແຜນຜັງຮັບປະກັນນໍ້າຖ້ວມຂັງແມ່ນການສ້າງ ແລະ ຮັກສາອ່າງໂຕ່ງທໍາມະຊາດ ໃຫ້ສາມາດບັນຈຸນໍ້າຝົນສູງສຸດໃນຮອບ 100 ປີ (ປະມານ ........ $m^3$), ບໍລິຫານຈັດການນໍ້າແບບປະສົມປະສານ ການນໍາໃຊ້ອ່າງທໍາມະຊາດໃນສຸດ ນໍ້າຝົນ ແລະ ເປັນອ່າງໂຕ່ງນໍ້າໃນລະດູແລ້ງ ແລະ ຮັບປະກັນໃຫ້ການລະບາຍນໍ້າ ເຂົ້າ-ອອກຈາກຄອງນໍ້າ, ນໍ້າຂອງ ກ່ອນລະດູຝົນ ເພື່ອຈໍາກັດການສູບມອບນໍ້າໃນປະລິມານຫຼາຍ.

11.3. ແຜນຜັງການພັດທະນາ ແລະ ນໍາໃຊ້ຄອງນໍ້າວຽງຈັນ ໃຫ້ເປັນແຫຼ່ງທ່ອງທ່ຽວສີຂຽວລາຍການໜຶ່ງຂອງຕົວເມືອງຕະຫຼອດປີ ໂດຍກໍ່ສ້າງຄອງນໍ້າໃຫ້ໄດ້ມາດຖານ ປ້ອງກັນການເຊາະເຈື່ອນ ແລະ ບໍາບັດນໍ້າສະອາດ, ສ້າງທາງເດີນເຮືອຂະໜາດນ້ອຍ. **(ເບິ່ງແຜນທີ່ຊ້ອນທ້າຍຂໍ້ຕົກລົງສະບັບນີ້)**

11.4. ແຜນຜັງການພັດທະນາ ແລະ ນໍາໃຊ້ທີ່ດິນຄອງນໍ້າ ຍ່ານຕໍ່າໃຫ້ກາຍເປັນພື້ນທີ່ແຜ່ລະບາຍນໍ້າ ໂດຍຊ່ວຍໜູນຄອງນໍ້າໃນລະດູຝົນຕົກໜັກສູງສຸດ (ເກີນປະລິມານ 5 ລ້ານ $m^3$) ແລະ ກໍານົດເປັນເຂດຂຽວຢ່າງຕໍ່ເນື່ອງ ແລະ ສ້າງເປັນເຂດທ່ອງທ່ຽວໃໝ່, ເປັນເຂດກະສິກໍາສະອາດຢ່າງຍືນຍົງ, ຊຶ່ງເຂດນີ້ມີເນື້ອປະມານ 2,000 ເຮັກຕາ. **(ເບິ່ງຕາມແຜນທີ່ຊ້ອນທ້າຍຂໍ້ຕົກລົງສະບັບນີ້)**

11.5. ແຜນຜັງການກໍ່ສ້າງສິ່ງອໍານວຍ ໃຫ້ການນໍາໃຊ້ຄອງນໍ້າວຽງຈັນ ໄດ້ກໍານົດໃຫ້ມີເຂດບໍລິການທ່າເຮືອຂະໜາດນ້ອຍ ຂຶ້ນ-ລົງ ຄອງນໍ້າ, ສ້າງສວນສີຂຽວ ແລະ ກໍ່ສ້າງເສັ້ນທາງທ່ອງທ່ຽວກະສິກໍາສີຂຽວ, ໂຄງການປູກຫຍ້າ , ປູກໝາກໄມ້, ຕົ້ນໄມ້ ເອກະພາບເປັນແຕ່ລະຍ່ານ ແລະ ອື່ນໆ.

**ໝວດທີ 3**

**ອົງການຄຸ້ມຄອງ ແລະ ກວດກາ**

**ມາດຕາ 12 ອົງການຄຸ້ມຄອງ**

ອົງການຄຸ້ມຄອງປະກອບດ້ວຍ:

12.1. ອົງການປົກຄອງນະຄອນຫຼວງວຽງຈັນ

- ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຕິດຕາມ, ກວດກາການຄຸ້ມຄອງ, ນໍາໃຊ້ທີ່ດິນເຂດສະຫງວນ ແລະ ຄວາມສະອາດຂອງຄອງນໍ້າ ໃຫ້ເປັນໄປຕາມຮູບແບບ, ແຜນຜັງ ແລະ ມາດຖານທີ່ກໍານົດ.
- ພະແນກກະສິກໍາ ແລະ ປ່າໄມ້ ຕິດຕາມ, ກວດກາການນໍາໃຊ້ຄອງນໍ້າ, ອ່າງເກັບນໍ້າ ແລະ ດິນເຂດສະຫງວນຕາມແຜນຜັງທີ່ກໍານົດ ແລະ ເປັນຜູ້ຈັດຕັ້ງປະຕິບັດວຽກງານດ້ານກະສິກໍາ ແລະ ປ່າໄມ້ (ເຂດຂຽວ).

- ພະແນກໂຍທາທິການ ແລະ ຂົນສົ່ງ ຕິດຕາມ, ກວດກາການກໍ່ສ້າງ ແລະ ການນຳໃຊ້ຄອງນ້ຳ-ອ່າງເກັບນ້ຳ, ກິດຈະການກໍ່ສ້າງອື່ນໆໃນເຂດສະຫງວນ ແລະ ນອກເຂດສະຫງວນໃກ້ຄຽງ ຕາມມາດຖານຄອງນ້ຳ ແລະ ແຜນຜັງເຂດສະຫງວນ ທັງສອງຄ່ອງ, ກົມກຽວກັບແຜນລວມຂອງລັດຖະບານ.

- ພະແນກແຜນການ ແລະ ການລົງທຶນ ເປັນຜູ້ຈັດສັນເຂດພັດທະນາ ແລະ ລະດົມນັກລົງທຶນພາຍໃນ ແລະ ຕ່າງປະເທດ ລົງທຶນໃນເຂດລຸ່ມຄອງນ້ຳ.

12.2. ອົງການປົກຄອງເມືອງໄຊເສດຖາ, ເມືອງສີສັດຕະນາກ, ເມືອງໄຊທານີ, ເມືອງປາກງື່ມ ແລະ ເມືອງຫາດຊາຍຟອງ ເປັນຜູ້ຊຸກຍູ້, ຕິດຕາມການນຳໃຊ້ທີ່ດິນ ແລະ ຄອງນ້ຳ, ການກໍ່ສ້າງໃຫ້ໄປຕາມແຜນການ ລວມ ແລະ ແຜນຜັງສະເພາະຂອງໂຄງການ (ກິດຈະການ) ຢ່າງເຂັ້ມງວດ, ກໍລະນີພົບເຫັນຜູ້ລະເມີດ ຕ້ອງເປັນເຈົ້າການຕັກເຕືອນ ນຳພາແກ້ໄຂໃຫ້ທັນການ.

12.3. ອົງການປົກຄອງບ້ານຢູ່ເຂດລຸ່ມຄອງນ້ຳ ເປັນຜູ້ຊຸກຍູ້, ຕິດຕາມບຸກຄົນ, ນິຕິບຸກຄົນທີ່ນຳໃຊ້ທີ່ດິນ ແລະ ຄອງລະບາຍນ້ຳ ໃຫ້ດຳເນີນຕາມແຜນຜັງທີ່ໄດ້ກຳນົດ, ກໍລະນີພົບເຫັນຜູ້ລະເມີດ ຕ້ອງເປັນເຈົ້າການຕັກເຕືອນ ແລະ ລາຍງານໃຫ້ອົງການປົກຄອງເມືອງ ແລະ ການຈັດຕັ້ງກ່ຽວຂ້ອງ ພ້ອມກັນແກ້ໄຂບັນຫາໃຫ້ທັນການ.

12.4. ຫ້ອງການຄຸ້ມຄອງ ແລະ ພັດທະນາເຂດສະຫງວນຄອງນ້ຳວຽງຈັນ ເປັນອົງກອນຮັບຜິດຊອບໂດຍກົງ (ເບິ່ງມາດຕາ 13).

**ມາດຕາ 13 ກົນໄກການຄຸ້ມຄອງ**

**13.1.** ໃຫ້ສ້າງຕັ້ງຫ້ອງການ (ໜ່ວຍງານ) ຄຸ້ມຄອງຄອງນ້ຳວຽງຈັນ ໂດຍມີຫ້ອງການຢູ່ສະເພາະ ແລະ ສັງ ກັດຢູ່ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ເພື່ອດຳລົງບົດບາດເປັນຜູ້ ອຳນວຍຄວບຄຸມໂດຍກົງຕໍ່ການພັດທະນາ ແລະ ຄຸ້ມຄອງເຂດລຸ່ມຄອງນ້ຳວຽງຈັນ; ມີສິດ ແລະ ໜ້າທີ່ຈັດຕັ້ງປະຕິບັດ ແລະ ຮັບຜິດຊອບຕໍ່ຜົນໄດ້ ແລະ ຜົນເສຍຕາມຂໍ້ຕົກລົງສະບັບນີ້. ຫ້ອງການຄຸ້ມຄອງເຂດສະຫງວນຄອງ ນ້ຳວຽງຈັນ ແມ່ນໜ່ວຍງານຂອງລັດ ແລະ ຮ່ວມມືກັບພາກເອກະຊົນຕາມກົດໝາຍກຳນົດ ໂດຍມີງົບປະມານເຄື່ອນໄຫວ, ມີລາຍຮັບ-ລາຍຈ່າຍທີ່ເໝາະສົມ **(ພາລະບົດບາດ, ສິດໜ້າທີ່ ຈະມີລະບຽບການສະເພາະ).**

13.2. ການຄຸ້ມຄອງເຂດລຸ່ມຄອງນ້ຳວຽງຈັນ ແມ່ນຄຸ້ມຄອງລວມສູນເປັນເອກະພາບຕາມແຜນຜັງ ແລະ ກົດໝາຍກ່ຽວຂ້ອງກຳນົດ ໂດຍແມ່ນຫ້ອງການຄຸ້ມຄອງຄອງນ້ຳວຽງຈັນ ເປັນຕົວແທນ ທັງເປັນຜູ້ຕອບຮັບການສົນໃຈລົງທຶນ ແລະ ການແກ້ໄຂບັນຫາຫຍຸ້ງຍາກໃນເຂດລຸ່ມຄອງນ້ຳ ແລ້ວສະເໜີໄປຂະແໜງການກ່ຽວຂ້ອງ ເພື່ອແກ້ໄຂ.

**ມາດຕາ 14 ອົງການກວດກາ**

ອົງການກວດກາການຄຸ້ມຄອງ ແລະ ພັດທະນາເຂດສະຫງວນຄອງນ້ຳວຽງຈັນ ປະກອບດ້ວຍອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

14.1. **ອົງການກວດກາພາຍໃນ** ແມ່ນຫ້ອງການ ຫຼື ໜ່ວຍງານຄຸ້ມຄອງຄອງນ້ຳວຽງຈັນ ຕາມທີ່ລະບຸໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.

14.2. **ອົງການກວດກາພາຍນອກ**

- ສະພາປະຊາຊົນ ນະຄອນຫຼວງວຽງຈັນ.
- ອົງການກວດກາລັດ ນະຄອນຫຼວງວຽງຈັນ.
- ຄະນະກຳມະການສິ່ງແວດລ້ອມ ນະຄອນຫຼວງວຽງຈັນ.
- ສື່ມວນຊົນ ແລະ ປະຊາຊົນ ແລະ ອື່ນໆ.

**ມາດຕາ 15 ສິດ ແລະໜ້າທີ່ຂອງອົງການກວດກາ**

**15.1.** ກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

15.2. ກວດກາການເຄື່ອນໄຫວວຽກງານຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງທີ່ກ່ຽວກັບການຄຸ້ມຄອງ ແລະ ພັດທະນາເຂດສະຫງວນຄອງນ້ຳວຽງຈັນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

15.3. ສະເໜີການຈັດຕັ້ງທີ່ກ່ຽວຂ້ອງ ອອກຄຳສັ່ງ, ຄຳແນະນຳ ຫຼື ລະບຽບການລະອຽດໃນການຈັດຕັ້ງປະຕິບັດ.

15.4. ພ້ອມກັນປະສານສົມທົບກັບພາກສ່ວນອື່ນໆທີ່ກ່ຽວຂ້ອງ ໃນການແກ້ໄຂກໍລະນີມີເຫດເກີດຂຶ້ນ, ພ້ອມທັງສະຫຼຸບ, ລາຍງານການເຄື່ອນໄຫວກວດກາໃນແຕ່ລະໄລຍະ ໃຫ້ຂັ້ນເທິງຮັບຊາບ.

**ມາດຕາ 16 ຮູບການກວດກາ ປະກອບດ້ວຍ 03 ຮູບການ**

16.1. ການກວດກາແບບປົກກະຕິ ແມ່ນການກວດກາຕາມແຜນການຂອງອົງການບໍລິຫານ ແລະ ຂອງຄະນະ ກວດກາລັດແຕ່ລະຂັ້ນ ທີ່ວາງໄວ້.

16.2. ການກວດກາຕາມຄຳສັ່ງ ຫຼື ຄຳສະເໜີ ແມ່ນການກວດກາຕາມຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ຂອງຫົວໜ້າອົງການບໍລິຫານ, ຂອງຄະນະກວດກາລັດແຕ່ລະຂັ້ນ ແລະ ຄຳສະເໜີຂອງພົນລະເມືອງ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຊາບລ່ວງໜ້າ.

16.3. ການກວດກາແບບກະທັນຫັນ ແມ່ນກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດ ກາຊາບລ່ວງໜ້າ.

## ໝວດທີ 4
## ລາຍຮັບ-ລາຍຈ່າຍ ເພື່ອການພັດທະນາການ ແລະ ຄຸ້ມຄອງເຂດສະຫງວນຄອງນ້ຳວຽງຈັນ

**ມາດຕາ 17 ແຫຼ່ງລາຍຮັບ**

ແຫຼ່ງລາຍຮັບສຳລັບຮັບໃຊ້ວຽກງານການຄຸ້ມຄອງ ແລະ ພັດທະນາເຂດສະຫງວນຄອງນ້ຳວຽງຈັນ ແມ່ນໄດ້ມາຈາກ:

17.1. ງົບປະມານຂອງລັດ.

17.2. ສ່ວນແບ່ງຈາກການເຊົ່າ, ສຳປະທານ ແລະ ເກັບຈາກຜູ້ເຮັດບໍລິການ ຢູ່ເຂດສະຫງວນຄອງນ້ຳວຽງຈັນທີ່ທາງການຕົກລົງມອບໃຫ້.

17.3. ການປັບໄໝຜູ້ທີ່ລະເມີດແຜນຜັງ ເຂດສະຫງວນຄອງນ້ຳວຽງຈັນ.

17.4. ການປະກອບສ່ວນຈາກສັງຄົມ ພາຍໃນ ແລະ ຕ່າງປະເທດ.

**ມາດຕາ 18 ລາຍຈ່າຍ**

18.1. ຈ່າຍໃນການປັກຫຼັກໝາຍ ເພື່ອສ້າງແຜນພັດທະນາໃນບໍລິເວນຂອບເຂດສະຫງວນ.

18.2. ຈ່າຍເຂົ້າໃນການຮັກສາອະນາໄມ.

18.3. ການບໍລິຫານ ແລະ ບຳລຸງຮັກສາຫົວໂຄງການຄອງນ້ຳ, ອ່າງໂຕ່ງນ້ຳ, ສວນສີຂຽວ, ທ່າເຮືອຂະໜາດນ້ອຍ.

18.4. ຈ່າຍເຂົ້າໃຫ້ການບໍລິຫານຂອງຫ້ອງການ ແລະ ເງິນເດືອນຂອງພະນັກງານ ຫຼື ອາສາສະໝັກ.

18.5. ລາຍຈ່າຍອື່ນໆ ຕາມລະບຽບການເງິນຂອງລັດ.

**ມາດຕາ 19 ການເປີດບັນຊີລາຍຮັບ-ລາຍຈ່າຍ**

ການເປີດບັນຊີລາຍຮັບ-ລາຍຈ່າຍ ຂອງຫ້ອງການຄຸ້ມຄອງ ແລະ ພັດທະນາເຂດສະຫງວນຄອງນ້ຳວຽງຈັນ ໃຫ້ລວມສຸນໃນວຽກງານຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 20 ຂໍ້ຫ້າມ ສຳລັບການຈັດຕັ້ງຂອງລັດ-ສັງຄົມ**

20.1. ຫ້າມການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ ຫຼື ນິຕິບຸກຄົນໃດ ດຳເນີນການດັດແປງແຜນຜັງການພັດທະນາ ຫຼື ດຳເນີນການກໍ່ສ້າງ ໂດຍບໍ່ໄດ້ຮັບອະນຸຍາດຈາກລັດຖະບານ ຢ່າງເດັດຂາດ.

20.1. ການດັດແກ້ແຜນຜັງການພັດທະນາ ຈະດຳເນີນໄດ້ກໍ່ຕໍ່ເມື່ອໄດ້ຜ່ານການຄົ້ນຄວ້າ, ວິໄຈ, ຜ່ານການປະກອບຄຳເຫັນຈາກຂະແໜງການກ່ຽວຂ້ອງຂອງສູນກາງ, ນະຄອນຫຼວງວຽງຈັນ ແລະ ປະຊາຊົນ ຢູ່ເຂດສະຫງວນຄອງນ້ຳວຽງຈັນກ່ອນ ຈຶ່ງສາມາດປັບປຸງ, ປ່ຽນແປງໄດ້.

**ມາດຕາ 21 ຂໍ້ຫ້າມ ສຳລັບບຸກຄົນ**

21.1. ຫ້າມບຸກຄົນໃດ ເຂົ້າຄຸ້ມຄອງຄອງນຳໃຊ້ເຂດສະຫງວນຄອງນ້ຳວຽງຈັນ ໂດຍບໍ່ໄດ້ຮັບອະນຸຍາດຈາກການ ຈັດຕັ້ງລັດທີ່ມີສິດອະນຸຍາດຢ່າງເດັດຂາດ.

21.2. ຫ້າມກໍ່ສ້າງ, ປຸກສ້າງ, ຂຸດ ຫຼື ຖົມດິນ ໃນເຂດສະຫງວນ ຫຼື ຖິ້ມສິ່ງເສດເຫຼືອລົງເຂດສະຫງວນ ທຳລາຍສະພາບແວດລ້ອມໜ້າດິນ-ພື້ນດິນ, ສ້າງສິ່ງກີດຂວາງການໄຫຼຂອງນ້ຳຢ່າງເດັດຂາດ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 22 ນະໂຍບາຍຕໍ່ຜູ້ມີຜົນງານ**

ພາກສ່ວນການຈັດຕັ້ງລັດ, ການຈັດຕັ້ງສັງຄົມ, ນິຕິບຸກຄົນ ແລະປະຊາຊົນທົ່ວໄປ ທີ່ເອົາໃຈໃສ່ປົກປ້ອງ, ຄຸ້ມຄອງ, ປົກປັກຮັກສາ ແລະ ລາຍງານພຶດຕິກຳບໍ່ດີ ຂອງບຸກຄົນກ່ຽວຂ້ອງ ທີ່ມີການເຄື່ອນໄຫວ ທຳລາຍຂໍ້ມູນ, ຫຼັກຖານ ຫຼື ລ່ວງລ້ຳເຂດສະຫງວນໂດຍພາລະການ ຈະໄດ້ຮັບການຍ້ອງຍໍ, ຊົມເຊີຍ ແລະ ນະໂຍບາຍອື່ນໆ ຕາມລະບຽບການ.

**ມາດຕາ 23 ມາດຕະການຕໍ່ຜູ້ລະເມີດ**

23.1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຕ່າງໆ ຫາກມີເຈດຕະນາລ່ວງລ້ຳເຂົ້ານຳໃຊ້ໃນເຂດສະຫງວນ, ໄດ້ທຳລາຍຫຼັກໝາຍເຂດສະຫງວນ ຫຼື ນຳໃຊ້ເຂດສະຫງວນໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກກ່າວເຕືອນ, ປັບໃໝ ຫຼື ຖືກດຳເນີນຄະດີຕາມແຕ່ລະກໍລະນີ. ພ້ອມນີ້ ຖ້າຫາກການບຸກລຸກເຂົ້າໃນເຂດສະຫງວນສ້າງຜົນເສຍຫາຍ ຈະຕ້ອງໄດ້ສອ້ມແປງ, ຟື້ນຟູໃຫ້ຢູ່ໃນສະພາບເດີມ ຜູ້ລະເມີດຈະຕ້ອງຮັບຜິດຊອບຕໍ່ການສ້ອມແປງປັບປຸງຄືນ ໂດຍບໍ່ມີເງື່ອນໄຂ.

23.2. ອົງການຈັດຕັ້ງຂອງລັດ ຫາກອອກອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ເຂົ້າຄຸ້ມຄອງ, ນຳໃຊ້ທີ່ດິນ ໃນບໍລິເວນຂອງເຂດສະຫງວນ ຫຼື ເຂົ້າພັດທະນາໂດຍບໍ່ຖືກຕ້ອງຕາມຂັ້ນຕອນ ຈະຖືກລົບລ້າງການອະນຸຍາດນັ້ນ ພ້ອມທັງຖືກກ່າວເຕືອນ ຫຼື ຖືກວິໄນຕາມຄວາມເໝາະສົມ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 24 ການຈັດຕັ້ງປະຕິບັດ**

24.1 ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພະແນກກ່ຽວຂ້ອງ ເຜີຍແຜ່ແນະນຳ, ຝຶກອົບຮົມ ແລະ ຈັດພິມປຶ້ມຄູ່ມືແນະນຳການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ອຳນາດການປົກຄອງ ແລະ ປະຊາຊົນໃນເຂດສະຫງວນບັນດາໂຄງການຕ່າງໆ ໄດ້ຮັບຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

24.2. ບຸກຄົນ, ນິຕິບຸກຄົນໃດ ທີ່ສົນໃຈ ຫຼື ຂ້ອງຄາໃຈຕໍ່ໂຄງການນີ້ ໃຫ້ສະເໜີຈາກທາງລັດຖະການ ຫາ ຫ້ອງການພັດທະນາ ແລະ ຄຸ້ມຄອງເຂດສະຫງວນຄອງນ້ຳວຽງຈັນ ຫຼື ພະແນກການກ່ຽວຂ້ອງໂດຍກົງ.

24.3. ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ແລະ ພະແນກການກ່ຽວຂ້ອງອື່ນໆ ກຳນົດແຜນຜັງ ແລະ ລະບຽບການເພີ່ມເຕີມໃນບໍລິເວນເຂດອ້ອມແອ້ມເຂດສະຫງວນ ໃນການປຸກສ້າງ, ການນຳໃ ຊ້ທີ່ດິນ ໃຫ້ກົມກຽວກັນ ແລະ ສະໜັບສະໜູນເຂດສະຫງວນຄອງນ້ຳວຽງຈັນ ເຮັດໃຫ້ ຈຸດປະສົງຂອງເຂດນີ້ ບັນລຸຄາດໝາຍກຳນົດໄວ້.

24.4. ໃຫ້ສ້າງຕັ້ງຫ້ອງການພັດທະນາ ແລະ ຄຸ້ມຄອງ ຄອງນ້ຳວຽງຈັນ ເພື່ອເຮັດໜ້າທີ່ໂດຍກົງ ໃນການຄຸ້ມ ຄອງເຂດສະຫງວນຄອງນ້ຳວຽງຈັນ ຕາມມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 25 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ 30 ວັນ ເປັນຕົ້ນໄປ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ປອ.ສິນລະວົງ ຄຸດໄພທູນ

ບ່ອນສົ່ງ:
- ເຈົ້າຄອງ-ຮອງເຈົ້າຄອງ ນວ ທ່ານລະ 01 ສະບັບ;
- ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ພາກສ່ວນລະ 01 ສະບັບ;
- ສະພາປະຊາຊົນ ນະຄອນຫຼວງວຽງຈັນ 01 ສະບັບ;
- ສະມາຊິກອົງການປົກຄອງ ແລະ ເມືອງ ນວ ພາກສ່ວນລະ 01 ສະບັບ;
- ເກັບມ້ຽນສຳເນົາ 02 ສະບັບ.